**EDD** Employment Development Department
State of California

**ວັນທີແຈ້ງການ: 00/00/0000**

**ຊື່ຜູ້ຮຽກຮ້ອງ**
**ທີ່ຢູ່ຜູ້ຮຽກຮ້ອງ ເມືອງ,**
**CA ລະຫັດໄປສະນີ**

## ແຈ້ງການເງື່ອນໄຂກຳນົດ ເພື່ອລົງທະບຽນເຮັດວຽກ

ດຽວນີ້ທ່ານໄດ້ຍື່ນຂໍ້ຮຽກຮ້ອງຂໍປະກັນໄພຫວ່າງງານ (UI) ແລ້ວ, ທາງ Employment Development Department (EDD, ກົມພັດທະນາການຈ້າງງານ) ຕ້ອງການໃຫ້ທ່ານລົງທະບຽນເຮັດວຽກດ້ວຍການໃຊ້ CalJOBS℠, ເຊິ່ງເປັນລະບົບການແລກປ່ຽນແຮງງານອອນລາຍຂອງລັດຄາລິຟໍເນຍ.

ທ່ານມີເວລາ **21 ວັນນັບຈາກວັນທີຂອງແຈ້ງການນີ້** ເພື່ອເຂົ້າເຖິງ CalJOBS ເພື່ອປະກອບຂໍ້ມູນການລົງທະບຽນຂອງທ່ານໃຫ້ສຳເລັດ ແລະ ເພີ່ມໃບຊີວະປະຫວັດໃສ່. ຖ້າທ່ານໄດ້ໃຊ້ CalJOBS ມາກ່ອນແລ້ວແລ້ວ, ທ່ານຈະຕ້ອງໄດ້ອັບເດດຂໍ້ມູນການລົງທະບຽນຂອງທ່ານ ແລະ ເພີ່ມປະຫວັດການເຮັດວຽກຫຼ້າສຸດຂອງທ່ານໃສ່.

ຖ້າຜ່ານມາທ່ານຍັງບໍ່ທັນໄດ້ໃຊ້ CalJOBSເທື່ອ, EDD ໄດ້ເລີ່ມຕົ້ນບັນທຶກການລົງທະບຽນກ່ອນໃຫ້ທ່ານແລ້ວ. ເພື່ອດຳເນີນຂັ້ນຕອນໃຫ້ສຳເລັດ, ເຂົ້າສູ່ລະບົບຢູ່ທີ່ **www.caljobs.ca.gov**. ຊື່ຜູ້ໃຊ້ຂອງທ່ານແມ່ນນາມສະກຸນເຕັມຂອງທ່ານ, ຕົວອັກສອນເລີ່ມຕົ້ນຂອງຊື່ທ່ານ ແລະ ເລກປະກັນສັງຄົມ (SSN) ສີ່ຕົວສຸດທ້າຍຂອງທ່ານ. ລະຫັດຜ່ານຂອງທ່ານແມ່ນສອງຕົວເລກວັນທີ່ທ່ານເກີດ, ສອງຕົວເລກເດືອນທີ່ທ່ານເກີດ ແລະ ສີ່ຕົວເລກສຸດທ້າຍຂອງ SSN ຂອງທ່ານ.

**ຕົວຢ່າງ:** ສຳລັບຄົນທີ່ມີຊື່ Jane Smith, ເກີດວັນທີ 4 ກໍລະກົດ ແລະ ມີ SSN ສີ່ຕົວສຸດທ້າຍແມ່ນ 1234. ຢ່າລືມໃຊ້ຂໍ້ມູນຂອງຕົວທ່ານເອງ ເມື່ອທ່ານເຂົ້າສູ່ລະບົບ CalJOBS.

| | |
|---|---|
| **ຊື່ຜູ້ໃຊ້:** | Smithj1234 |
| **ລະຫັດຜ່ານ:** | 04071234 |

ທ່ານຈະໄດ້ຮັບການເຕືອນຂຶ້ນມາໃຫ້ປ່ຽນລະຫັດຜ່ານຊົ່ວຄາວຂອງທ່ານ ເມື່ອທ່ານເຂົ້າສູ່ລະບົບເປັນຄັ້ງທຳອິດ. ຖ້າທ່ານບໍ່ສາມາດເຂົ້າສູ່ລະບົບໄດ້ ຫຼື ຕ້ອງການຄວາມຊ່ວຍເຫຼືອ, ກະລຸນາຕິດຕໍ່ America's Job Center of California℠ (AJCC, ສູນວຽກເຮັດອະເມຣິກາຂອງລັດຄາລິຟໍເນຍ) ປະຈຳທ້ອງຖິ່ນຂອງທ່ານດັ່ງມີລາຍຊື່ຢູ່ລຸ່ມນີ້.

**ການບໍ່ລົງທະບຽນ ແລະ ອັບເດດປະຫວັດຂອງທ່ານຢູ່ໃນ CalJOBS℠ ອາດຈະມີຜົນກະທົບຕໍ່ການມີສິດໄດ້ຮັບຜົນປະໂຫຍດ UI (ປະກັນໄພຫວ່າງງານ) ຂອງທ່ານ**

ຢູ່ໃນ CalJOBS, ທ່ານສາມາດສ້າງໃບຊີວະປະຫວັດຄຸນນະພາບທີ່ສາມາດໃຫ້ນາຍຈ້າງລົງທະບຽນເບິ່ງໄດ້. ທ່ານສາມາດເບິ່ງ ແລະ ສະໝັກວຽກທີ່ເປີດໃຫ້ສະໝັກໄດ້ຢ່າງກວ້າງຂວາງທົ່ວລັດຄາລິຟໍເນຍ. ທ່ານຍັງສາມາດຕັ້ງ "Virtual Recruiter" (ຕົວນັບຈຸສະເໝືອນ) ໄດ້ຢູ່ໃນພາກ ພາກ "Job Seeker Services" (ການບໍລິການຜູ້ຊອກວຽກ) ເພື່ອແຈ້ງໃຫ້ທ່ານຮູ້ກ່ຽວກັບວຽກເປີດໃຫ້ສະໝັກທີ່ເໝາະສົມກັບທັກສະ ແລະ ຈຸດປະສົງຂອງທ່ານໂດຍອັດຕະໂນມັດທາງອີເມວ.

ເພື່ອເລີ່ມຕົ້ນ, ທ່ານອາດຈະເຂົ້າເຖິງ CalJOBS ອອນລາຍໄດ້ຢູ່ທີ່ **www.caljobs.ca.gov ຫຼື ໂດຍການໄປຫາ AJCC ຢູ່ໃນທ້ອງຖິ່ນຂອງທ່ານ**. ຖ້າທ່ານບໍ່ໃຊ້ອິນເຕີເນັດ ຫຼື ຕ້ອງການຄວາມຊ່ວຍເຫຼືອໃນການເຂົ້າເຖິງ CalJOBS, ໃຫ້ເຂົ້າໄປຫາສູນວຽກເຮັດຢູ່ໃກ້ທີ່ສຸດຂອງທ່ານ ເຊິ່ງເປັນບ່ອນທີ່ທ່ານສາມາດໃຊ້ຄອມພິວເຕີສຳລັບການຊອກວຽກເຮັດທາງອອນລາຍຂອງທ່ານ ແລະ ມີພະນັກງານຊ່ວຍທ່ານທຸກໆຂັ້ນຕອນວິທີການຊອກຫາ.

ທີ່ຢູ່ ແລະ ເບີໂທລະສັບຂອງ AJCC ປະຈຳທ້ອງຖິ່ນຂອງທ່ານແມ່ນ:

**America's Job Center of California (ສູນວຽກເຮັດອາເມຣິກາຂອງລັດຄາລິຟໍເນຍ) ປະຈຳທ້ອງຖິ່ນຂອງທ່ານ**
**0000 Main St.**
**City, CA ZIP Code**
**000-00-0000**

EDD (ກົມພັດທະນາການຈ້າງງານ) ເຊິ່ງເປັນນາຍຈ້າງ/ໂຄງການໃຫ້ໂອກາດເທົ່າທຽມກັນ ແມ່ນຫຸ້ນສ່ວນຂອງເອກະສານຕີພິມນີ້. ການຊ່ວຍເຫຼືອ ແລະ ການບໍລິການເສີມແມ່ນມີໃຫ້ຕາມການຮ້ອງຂໍແກ່ຄົນພິການ. ການຂໍການບໍລິການ, ຄວາມຊ່ວຍເຫຼືອ ແລະ/ຫຼື ຮູບແບບທາງເລືອກອື່ນຈຳເປັນຕ້ອງໄດ້ເຮັດໂດຍການໂທຫາເບີຂ້າງເທິງ (ສຽງ) ຫຼື TTY 1-800-815-9387.

ຕົວຢ່າງ